ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 002 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 11 ມັງກອນ 2018

ສຳນັກງານ ຄຄຊ
ລົງເລກ ..........54..........
ວັນທີ ....15 JAN 2018....
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 18-22/12/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,44% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດໃນອາທິດນີ້ ເພີ່ມຂຶ້ນເປັນ 245.000 ຄົນ. ພ້ອມກັນນັ້ນ, ຕົວເລກລາຍໄດ້ສ່ວນບຸກຄົນເພີ່ມຂຶ້ນພຽງ 0,3% ຂອງເດືອນ 11/2017, ຈາກເພີ່ມຂຶ້ນ 0,4% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 11-15/12/2017 | ອາທິດນີ້ 18-22/12/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1795 | 1,1847 | -0,44% |
| ເຢນ/ໂດລາ | 112,14 | 113,34 | -1,06% |
| ບາດ/ໂດລາ | 32,50 | 32,74 | -0,73% |
| ເປໂຊ/ໂດລາ | 50,44 | 50,12 | 0,64% |
| ຣູເປັຍ/ໂດລາ | 13.577 | 13.560 | 0,13% |
| ໂດລາສິງກະໂປ/ໂດລາ | 1,3463 | 1,3444 | 0,14% |
| ຢວນ/ໂດລາ | 6,6073 | 6,5727 | 0,53% |

### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 1,50% ຈາກ 57,22 ໂດລາ/ບາເຣວ ມາເປັນ 58,08 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 6,60 ລ້ານບາເຣວ ຂອງອາທິດທີ 15/12/2017 ຈາກຫຼຸດລົງ 5,12 ລ້ານບາເຣວ ໃນອາທິດຜ່ານມາ;

- ສໍາລັບລາຄາຄໍາ ເພີ່ມຂຶ້ນ 0,87% ຈາກ 1.256,96 ໂດລາ/ອອນ ມາເປັນ 1.267,92 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນເຂົ້າມາຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາເພີ່ມຂຶ້ນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ແຕ່ແຂງຄ່າຂຶ້ນ 0,44% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,24% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,35% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 11-15/12/2017 | | | ອາທິດນີ້ 18-22/12/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.300,99 | 8.326,65 | 8.312,62 | 8.300,53 | 8.333,83 | 8.315,56 | 0,01% | -0,09% | -0,04% | 0,20% | 0,25% | 0,24% |
| ບາດ | 255,86 | 257,64 | 257,07 | 254,70 | 256,70 | 255,94 | 0,46% | 0,37% | 0,44% | -8,29% | -8,41% | -8,35% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນM2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 0,91% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,86%;
- ປະລິມານເງິນ M2 ຫຼຸດລົງ 0,96% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,09%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (15-21/12/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 29,37 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 61,72 ລ້ານໂດລາ ແລະ ຂາຍໂດລາໄດ້ 32,35 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 791,33 ລ້ານບາດ (ໃນນີ້ຊື້ບາດໄດ້ 249,00 ລ້ານບາດ ແລະ ຂາຍບາດໄດ້ 1.040,33 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາ ເພີ່ມຂຶ້ນ 17,62% ແລະ ເງິນບາດ ເພີ່ມຂຶ້ນ 68,20%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈໍານວນ 13,00 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 12,95 ລ້ານໂດລາສະຫະລັດ ແລະ ເງິນບາດ ຈໍານວນ 137,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 08-14/12/2017 | | ອາທິດນີ້ 15-21/12/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **43,93** | **163,59** | **61,72** | **249,00** | **40,50%** | **52,21%** |
| - ທ/ຄ ທຸລະກິດລັດ | 16,27 | 91,49 | 23,65 | 53,06 | 45,36% | -42,00% |
| - ທ/ຄ ທຸລະກິດອື່ນໆ | 27,66 | 72,10 | 38,07 | 195,94 | 37,64% | 171,76% |
| **2. ການຂາຍເງິນຕາຕ່າງປະເທດ** | **36,05** | **602,94** | **32,35** | **1.040,33** | **-10,26%** | **72,54%** |
| - ທ/ຄ ທຸລະກິດລັດ | 16,77 | 151,16 | 17,12 | 331,05 | 2,09% | 119,01% |
| - ທ/ຄ ທຸລະກິດອື່ນໆ | 19,28 | 451,78 | 15,23 | 709,28 | -21,01% | 57,00% |
| **ຊື້-ຂາຍສຸດທິ ທທກ** | **7,88** | **-439,35** | **29,37** | **-791,33** | **272,72%** | **80,11%** |
| - ຜົດດ່ຽງຊື້-ຂາຍ | 17,94% | -268,57% | 47,59% | -317,80% | 165,27% | 18,33% |
| **- ມູນຄ່າການຊື້-ຂາຍ** | **79,98** | **766,53** | **94,07** | **1.289,33** | **17,62%** | **68,20%** |
| **3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-3,18** | **0,00** | **13,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 13,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,18 | 0,00 | 0,00 | 0,00 | | |
| **4.ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **116,10** | **3,67** | **12,95** | **137,50** | | |
| **5.ທຫລ ກັບ ພາກສ່ວນອື່ນໆ** | **68,14** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 68,14 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 12/2017 ຄາດວ່າຈະຢູ່ໃນລະດັບ -0,81% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 1,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 62,08 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 102,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 186,10 ລ້ານໂດລາສະຫະລັດທຽບເທົ່າ.

### 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.298 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 208 ສະບັບ ເທົ່າກັບ 13,81% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 593,78 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 37,53 ຕື້ກີບ ເທົ່າກັບ 6,74% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (15-21/12/2017) ມີທັງໝົດ 4.262 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 4.027 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 1.153,42 ຕື້ກີບ ຈາກ 2.130,15 ຕື້ກີບ ມາເປັນ 976,73 ຕື້ກີບ ເທົ່າກັບ 54,14%;
- ກະຊວງການເງິນ: ມີການເຄື່ອນໄຫວຈານວນ 235 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 47,93 ຕື້ກີບ ຈາກ 476,51 ຕື້ກີບ ມາເປັນ 428,58 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.005,09 ຈຸດ ເພີ່ມຂຶ້ນ 0,86% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 127.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 534,01 ລ້ານກວ່າກີບ ເພີ່ມຂຶ້ນ 22,54% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 46,72% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 11-15/12/2017 | ດັດຊະນີອາທິດທີ 11-15/12/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 996,51 | 1.005,09 | 0,86 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 3.500 | 19.970.000 | 5.706 | **34.500** | **192.005.000** | **5.565** | 885,71 | 861,47 | -140 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 90.200 | 399.540.000 | 4.429 | **61.700** | **292.655.000** | **4.743** | -31,60 | -26,75 | 314 |
| ບໍລິສັດລາວເວີນມະຫາຊົນ | - | - | 3.500 | - | - | **3.500** | - | - | - |
| ບໍລິສັດປີໂຕຣລ້ຽມເທຣດດິ້ງລາວມະຫາຊົນ | 3.600 | 7.560.000 | 2.100 | - | - | **2.100** | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | 100 | 295.000 | 2.950 | - | - | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 5.100 | 8.425.000 | 1.652 | **30.800** | **49.355.000** | **1.602** | 503,92 | 485,82 | -50 |
| ທັງໝົດ | 102.500 | 435.790.000 | | **127.000** | **534.015.000** | | 23,90 | 22,54 | |

3. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສໍາເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສໍາມະນາຕ່າງໆ: ❶ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ທີ່ (ສະພາແຫ່ງຊາດ); ❷ ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງກອງທຶນປົກປ້ອງຜູ້ຝາກເງິນ ປະຈໍາປີ 2017 ທີ່ (ໂຮງແຮມລ້ານຊ້າງ); ❸ ກອງປະຊຸມປຶກສາຫາລືກ່ຽວກັບການຂາຍຮຸ້ນຂອງຜູ້ຖືຮຸ້ນເດີມໃຫ້ແກ່ມວນຊົນທົ່ວໄປ ຂອງບໍລິສັດ ລັດວິສາຫະກິດລາວໂທລະຄົມ ທີ່ (ສຄຄຊ); ❹ ກອງປະຊຸມຖອດຖອນບົດຮຽນ ແລະ ຕິດຕາມອົງກອນບໍລິຫານການເງິນຈຸລະພາກ ທີ່ (ແຂວງວຽງຈັນ) ແລະ ❺ ກອງປະຊຸມຮ່ວມຊີວິດທົ່ວສະຖາບັນການທະນາຄານ ທີ່ (ສທຄ);

- ຄະນະຜູ້ອຳນວຍການ ທຫລ ພ້ອມດ້ວຍຄະນະເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ບັນດາແຂວງພາກເໜືອ ແລະ ພາກໃຕ້ຄື: ແຂວງຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ, ຫຼວງພະບາງ, ໄຊຍະບູລີ, ຈຳປາສັກ, ເຊກອງ, ສາລະວັນ ແລະ ອັດຕະປື;

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ.
- **ກະກຽມເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ທັນວາ 2017 ທີ່ (ຫສນຍ); ❷ ກອງປະຊຸມແນະນຳຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ປະຈຳປີ 2018 ທີ່ (ຫໍປະຊຸມແຫ່ງຊາດ); ❸ ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງກົມຈັດຕັ້ງແລະພະນັກງານ ປະຈຳປີ ທີ່ (ທຫລ); ❹ ກອງປະຊຸມດຳເນີນຊີວິດການເມືອງຂອງໜ່ວຍພັກກົມບໍລິການທະນາຄານ ທີ່ (ທຫລ); ❺ ກອງປະຊຸມປຶກສາຫາລືກ່ຽວກັບແບບພິມລາຍງານຂໍ້ມູນເງິນຝາກຂອງກອງທຶນປົກປ້ອງຜູ້ຝາກເງິນ ທີ່ (ກທປ) ແລະ ❻ ພິທີອວຍພອນຄະນະຜູ້ອຳນວຍການ ທຫລ ເນື່ອງໃນໂອກາດສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ສາກົນ ປະຈຳປີ 2018 ທີ່ (ທຫລ);
- ທ່ານ ຜູ້ອຳນວຍການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ປະເທດ ສສ ຫວຽດນາມ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ໄຊລືຊາ ພູຍຍະວົງ